INSTITUT FRANÇAIS
LAOS ສະຖາບັນຝຣັ່ງ

Fête de la MUSIQUE

# ງານວັນດົນຕີ ປະຈຳປີ 2022
# ປະກາດຮັບສະໝັກ

**ວັນດົນຕີ ແມ່ນການສະແດງດົນຕີ ມວນຊົນ ບໍ່ເປັນການຫາລາຍໄດ້ ແລະ ເປີດກ້ວາງສຳລັບ ນັກດົນຕີ, ທັງມືໃໝ່ ແລະ ມືອາຊີບ,** ເປັນການສະເຫຼີມສະຫຼອງການຫຼິ້ນດົນຕີ ແລະ ເສີມຂະຫຍາຍຄວາມຫຼາກຫຼາຍທາງແນວດົນຕີທຸກປະເພດ. ນັກດົນຕີທີ່ມີຄວາມສົນໃຈ ຈະຖືກເຊີນມາຮ່ວມສະແດງໂດຍບໍ່ມີຄ່າຕົວ ແລະ ເປັນກິດຈະກຳທີ່ສາມາດຮັບຊົມໄດ້ໂດຍບໍ່ເສຍຄ່າໃດໆສຳລັບທຸກຄົນ. ນັບຕັ້ງແຕ່ ການປະກາດໃຫ້ມີວັນດົນຕີ ປີ **1982** ທີ່ປະເທດຝຣັ່ງ, ກາຍເປັນ **ເຄື່ອງໝາຍຂອງງານດົນຕີສາກົນທີ່ມີຄວາມສຳຄັນລະດັບຊາດ** ໃນຫຼາຍປະເທດ, ແລະ ປີ 2019 ຍັງຈັດຂຶ້ນຢູ່ **ຫຼາຍກ່ວາ 120 ປະເທດໃນທົ່ວໂລກ**.

ສະຖາບັນຝຣັ່ງປະຈຳລາວ ຮັບສະໝັກ ນັກຮ້ອງ, ນັກດົນຕີ ແລະ ວົງດົນຕີ ທີ່ເປັນມືໃໝ່ ຫຼື ມືອາຊີບ ທຸກໆປະເພດດົນຕີ ບໍ່ວ່າຈະເປັນ (ຄລາສສິກ, ປັອບ, ຣັອກ, ແຈສຊ໌, ພື້ນເມືອງ, ສາກົນ) ເພື່ອເຂົ້າຮ່ວມສະແດງຄອນເສີດໃຫຍ່ ໃນ**ວັນອັງຄານ** ທີ **21 ມິຖຸນາ 2022** ທີ່ ສະຖາບັນຝຣັ່ງ.

ເພື່ອເຂົ້າເຮົາທ່ານສາມາດປະຕິບັດຕາມຮູບແບບຕໍ່ໄປນີ້ :

ສົ່ງວິດີໂອມາໃຫ້ສະຖາບັນຝຣັ່ງ ເພື່ອການຄັດເລືອກ ກ່ອນວັນອັງຄານທີ **31 ພຶດສະພາ 2022** (1 ຫລື 2 ເພງ, ສຽງ ແລະ ຮູບພາບທີ່ມີຄຸນນະພາບດີ, ສົ່ງມາໃນຮູບແບບ MP4 ຫຼື ຟາຍສຽງ). ບັນດາວົງທີ່ຖືກເລືອກຈະຖືກເຊີນໃຫ້ມາຮ່ວມສະແດງຄອນເສີດໃຫຍ່, ໃນວັນອັງຄານ ທີ 21 ມິຖຸນາ 2022. ເວລາຄວາມຍາວຂອງການສະແດງ ແຕ່ 15 ນາທີ ຫາ 40 ນາທີ (ຂຶ້ນກັບຄວາມຕ້ອງການຂອງວົງ ແລະ ບົດເພງ) ຈະມອບໃຫ້ນັກດົນຕີແຕ່ລະຄົນ ຫຼື ແຕ່ລະວົງ. ງານແມ່ນຈະເລີ່ມແຕ່ 16 ໂມງ ຫາ ທ່ຽງຄືນ.

ແບບຟອມລົງທະບຽນສຳລັບນັກດົນຕີແຕ່ລະຄົນ ຫຼື ແຕ່ລະວົງ ຈະຕ້ອງຕື່ມຂໍ້ມູນໃຫ້ຖືກຕ້ອງຄົບຖ້ວນ ແລະ ສົ່ງໃຫ້ສະຖາບັນຝຣັ່ງກ່ອນວັນທີ່ **31** ພຶດສະພາ **2022** ນີ້ເທົ່ານັ້ນ.
ສາມາດເອົາ ຫຼື ດາວໂຫຼດແບບຟອມລົງທະບຽນໄດ້ທີ່ :

- ດາວໂຫຼດໄຟລ໌ PDF ທີ່ເວັບໄຊ໌ທ໌ ຂອງສະຖາບັນຝຣັ່ງ : http://www.if-laos.org/culture
- ຫຼື ສອບຖາມເອົາໄດ້ທີ່ ຝ່າຍຕ້ອນຮັບ ຂອງ ສະຖາບັນຝຣັ່ງ ຕາມໂມງເຮັດວຽກດັ່ງລຸ່ມນີ້ : ວັນຈັນ ຫາ ວັນສຸກ ແຕ່ 9 ມ ຫາ 17 ມ 30 ແລະ ວັນເສົາ, ແຕ່ເວລາ 9 ມ ຫາ 12 ມ 00.

ສະຖາບັນຝຣັ່ງ ຈະສະໜອງຜູ້ຄວບຄຸມເຄື່ອງສຽງ, ລະບົບເຄື່ອງສຽງ, ໄມໂຄໂຟນ, ດອກໄຟແສງສີ. ງານວັນຕີນີ້ ແມ່ນກິດຈະກຳທີ່ບໍ່ແມ່ນເປັນການຫາລາຍໄດ້ ແລະ ເປັນການເຂົ້າຮ່ວມແບບສະໝັກໃຈ, ຈຶ່ງບໍ່ມີງົບປະມານໃຫ້ (ສຳລັບຄ່າຕົວນັກສິລະປິນ ຫຼື ເງິນສຳລັບຄ່າເຊົ່າອຸປະກອນໃດໆ...) ນັກດົນຕີເລີຍ, ແຕ່ວ່າຈະມີເງິນອຸດໜູນໃຫ້ຄ່ານ້ຳມັນລົດ ແລະ ລ້ຽງອາຫານ.

ເອກະສານທີ່ຕ້ອງການ ເພື່ອລົງທະບຽນ :

- ແບບຟອມລົງທະບຽນ ຕື່ມຂໍ້ມູນຄົບຖ້ວນ, ລົງວັນທີ ແລະ ພ້ອມລາຍເຊັນ,
- ສົ່ງໄຟລ໌ບັນທຶກສຽງ ໜຶ່ງເພງ ຫຼື ຫຼາຍກວ່າ, ໃນຄຸນນະພາບທີ່ດີ, ໃນຮູບແບບ MP4 ຫຼື ເປັນໄຟລ໌ສຽງມາໃຫ້ພວກເຮົາ.
- ເພື່ອລົງທະບຽນ ແລະ ຢາກຮູ້ຂໍ້ມູນເພີ່ມເຕີມກະລຸນາຕິດຕໍ່ຫາ : fetedelamusique@if-laos.org

# ແບບຟອມລົງທະບຽນ

ແບບຟອມລົງທະບຽນນີ້ ຕ້ອງຕື່ມດ້ວຍຂໍ້ມູນທີ່ຖືກຕ້ອງຄົບຖ້ວນ ແລະ ສົ່ງໃຫ້ສະຖາບັນຝຣັ່ງທີ່ ນະຄອນຫຼວງວຽງຈັນ ຫຼື ທີ່ ຫຼວງພະບາງ ຊ້າສຸດບໍ່ໃຫ້ກາຍ **ວັນອັງຄານ ທີ 31/05/2022.** ສາມາດສົ່ງຜ່ານທາງ ອີເມວໄດ້ທີ່ feteddelamusique@if-laos.org

**ນາມສະກຸນ** *(ນັກດົນຕີ ຫຼື ຕາງໜ້າວົງ)*:

**ຊື່** *(ນັກດົນຕີ ຫຼື ຕາງໜ້າວົງ)*:

**ວັນທີ,ເດືອນ,ປີເກີດ** *(ນັກດົນຕີ ຫຼື ຕາງໜ້າວົງ)*: :

**ສັນຊາດ** :

**ໂຮງຮຽນ / ມະຫາວິທະຍາໄລ / ອົງການຈັດຕັ້ງ** (ຖ້າມີ) **:**

**ທີ່ຢູ່ :**

**ເບີໂທຕິດຕໍ່ :**

**ອີເມວ :**

**ເວັບໄຊ້ / Facebook :**

**ແນວດົນຕີ :**

**ເນື້ອໃນການສະແດງ** *( ຈໍານວນບົດເພງ, ຄວາມຍາວ, ພາສາ, ແລະ ອື່ນໆ.)*

*ຖ້າເປັນວົງແມ່ນສາມາດສະແດງໄດ້ສູງສຸດຮອດ 8 ບົດເພງ, ສໍາລັບນັກຮ້ອງ ຫຼື ນັກດົນຕີດ່ຽວ ຫຼື ຄູ່ ແມ່ນຫຼິ້ນໄດ້ສູງສຸດ 3 ບົດເພງ.*

**ຖ້າມາເປັນວົງ, ກະລຸນາແຈ້ງຊື່ວົງ :**

**ຈໍານວນຄົນໃນວົງ :**

**ເຄື່ອງດົນຕີທີ່ຫຼິ້ນ:**

**ວັນທີ :** **ລາຍເຊັນ :**